INSTITUT FRANÇAIS
LAOS ສະຖາບັນຝຣັ່ງ

# ການແຂ່ງຂັນວິດີໂອ "1 ຄວາມຄິດ, 1 ເລື່ອງ, 1 ນາທີ"

ສະຖາບັນຝຣັ່ງ ປະຈໍາ ລາວ ຈັດການແຂ່ງຂັນວິດີໂອ ໂດຍການນໍາໃຊ້ມືຖື, ໃນຫົວຂໍ້ "1 ຄວາມຄິດ, 1 ເລື່ອງ, 1 ນາທີ" ລະຫວ່າງ ວັນທີ 9-26 ພະຈິກ 2018. ປະກາດ ຜົນຂອງການແຂ່ງຂັນ ວັນທີ 30 ພະຈິກ 2018 ໃນງານ ວັນດິຈິຕອລ (29-30 ພະຈິກ 2018).
ໄອດໍ້ຂອງການແຂ່ງຂັນ, ປະທານກໍາມະການຕັດສິນຄັດເລືອກຜົນງານ ແມ່ນ ທ່ານ ນາງ ແມັດຕີ້ ໂດ່ (Mattie DO), ນັກສ້າງຮູບເງົາຍິງ ແຖວໜ້າຂອງປະເທດ. ຄະນະກໍາມະການຕັດສິນຍັງລວມມີບຸກຄົນອື່ນໃນຂົງເຂດວັດທະນະທໍາ ທີ່ຈະຕັດສິນຄັດເລືອກເອົາຜົນງານທີ່ຊະນະ ໃນວັນທີ 30 ພະຈິກ 2018.

## ການລົງທະບຽນແຂ່ງຂັນວິດີໂອ "1 ຄວາມຄິດ, 1 ເລື່ອງ, 1 ນາທີ"

### ຜູ່ເຂົ້າແຂ່ງຂັນ

ການແຂ່ງຂັນແມ່ນເປີດກ້ວາງ ສໍາລັບໄວໜຸ່ມທີ່ອາໄສໃນ ສປປ ລາວ ທີ່ມີອາຍຸ 15 ປີ ຂຶ້ນໄປ. ຮູບແບບຜົນງານທີ່ຮັບເອົາ : ເປັນຮູບພາບເຄື່ອນໄຫວພ້ອມສຽງ ນາມສະກຸນ .MP4 ຫຼື .MOV ຂະໜາດສູງສຸດ 200 MB, ສົ່ງຜົນງານຜ່ານທາງອີເມວ ກ່ອນ ວັນທີ 26 ພະຈິກ 2018 ເວລາ 17 ໂມງ.

ບັນດາຜູ່ເຂົ້າແຂ່ງຂັນ ມີຄວາມຮັບຜິດຊອບແຕ່ພຽງຜູ່ດຽວ ຕໍ່ກັບເນື້ອໃນທັງໝົດຂອງຜົນງານ ; ບໍ່ວ່າຈະເປັນການຮັບປະກັນວ່າໄດ້ຮັບອະນຸຍາດຈາກບຸກຄົນອື່ນ ທີ່ຖືກບັນທຶກພາບ, ສຽງ ຫຼື ຊື່ ໃນເນື້ອໃນຂອງຜົນງານ, ແລະ ບໍ່ໄດ້ນໍາໃຊ້ຜົນງານທີ່ຖືກສ້າງມາແລ້ວ ເຂົ້າໃນຜົນງານທີ່ສົ່ງເຂົ້າແຂ່ງຂັນ. ການສົ່ງຜົນງານຕ້ອງຮັບປະກັນວ່າບໍ່ມີໄວຣັດ. ຜູ່ເຂົ້າແຂ່ງຂັນ ສາມາດນໍາໃຊ້ນາມແຝງທີ່ຈະຖືກເອີ້ນໃນເວລາປະກາດຜົນ, ສ່ວນບັນດາຂໍ້ມູນແທ້ຈິງນັ້ນ ແມ່ນໃຫ້ລະບຸຢ່າງຊັດເຈນ ໃນແບບຟອມລົງທະບຽນ (ຊື່, ນາມສະກຸນ, ທີ່ຢູ່ໄປສະນີ, ອີເມວ, ເບີໂທຕິດຕໍ່), ເຊິ່ງ ຈະຖືກຮັກສາເປັນຄວາມລັບ.

### ວິທີການສ້າງຜົນງານ

ທ່ານສາມາດຖ່າຍວິດີໂອດ້ວຍມືຖື ຫຼື ແທັບເລັດ ແລະ ສາມາດນໍາໃຊ້ອຸປະກອນເສີມ ເຊັ່ນ ໄມໂຄຣໂຟນ, ຂາຈັບ, ແຜ່ນກອງແສງ (Filter), ເລນເສີມ ແລະ ອື່ນໆ. ໄລຍະເວລາຂອງຜົນງານ ຕ້ອງບໍ່ເກີນ 1 ນາທີ ລວມທັງ ການສະເໜີຊື່ (Générique ຫຼື Film's credits). ການເລືອກຫົວຂໍ້ແມ່ນເປີດກ້ວາງ. ຈະບໍ່ຮັບເອົາຜົນງານດັ່ງກ່າວ, ຫາກເນື້ອໃນບໍ່ໄດ້ແຕະຕ້ອງເລື່ອງການເມືອງ, ລາມົກອະນາຈານ, ບໍ່ເໝາະສົມ, ເປັນການໂຄສະນາ ຫຼື ເກີນຈິງ, ສ້າງຄວາມເສຍຫາຍຕໍ່ລະບຽບບ້ານເມືອງ ແລະ ສິນລະທໍາ.
ທຸກໆຮູບແບບຜົນງານສາມາດສົ່ງເຂົ້າແຂ່ງຂັນໄດ້ : ນະວະນິຍາຍ, ສາລະຄະດີ ແລະ ທຸກໆປະເພດ : ຄວາມຮັກ, ນະວະນິຍາຍວິທະຍາສາດ, ຕະຫຼົກ, ຕໍ່ສູ້ ຫຼື ສະຕັອບ ໂມຊັ່ນ (Stop Motion), ທາມແລັບ

(time lapse)... ທ່ານສາມາດນຳໃຊ້ເອັບເຟັກພິເສດສຳລັບມືຖື ເຂົ້າໃນການຕັດຕໍ່, ບໍ່ໃຫ້ເຫັນພາບຂອງເຄື່ອງໝາຍການຄ້າໃດນຶ່ງທີ່ຊັດເຈນ ເພື່ອການໂຄສະນາ, ທ່ານສາມາດນຳໃຊ້ ສຽງດົນຕີ ຫຼື ເພງທີ່ບໍ່ລະເມີດລິຂະສິດ.
ທ່ານສາມາດສົ່ງ ຫຼາຍຜົນງານທີ່ທ່ານເຮັດ ເຂົ້າແຂ່ງຂັນ, ແຕ່ຈະຄັດເລືອກເອົາພຽງຜົນງານນຶ່ງສຳລັບນຶ່ງຜູ່ເຂົ້າແຂ່ງຂັນ. ໃນເລລາລົງທະບຽນ, ກະລຸນານຳໃຊ້ ຊື່ນາມແຝງ, ອີເມວ ແລະ ລະຫັດຜ່ານ ດຽວກັນ.

**ຄຳບັນຍາຍຜົນງານ**

ຜູ່ເຂົ້າແຂ່ງຂັນ ສາມາດບໍ່ນຳໃຊ້ ຄຳບັນຍາຍ ຫຼື ໃຊ້ໃຫ້ໜ້ອຍທີ່ສຸດ ເພື່ອຫຼີກຫຼ່ຽງຄວາມຫຍຸ້ງຍາກ. ໃນກໍລະນີນຳໃຊ້ຄຳບັນຍາຍ (sous-titres / Sub-titles), ກະລຸນາ ເຮັດເປັນ ພາສາຝຣັ່ງ ຫຼື ພາສາອັງກິດ.

**ການຄັດເລືອກຜົນງານ**

ຜົນການແຂ່ງຂັນຈະຖືກແຈ້ງ ທາງເວັບໄຊ້ ຂອງ ສະຖາບັນຝຣັ່ງ ວັນທີ 29 ພະຈິກ 2018. ຜູ່ທີ່ຖືກຄັດເລືອກຈະຖືກຕິດຕໍ່ເປັນການສ່ວນຕົວ ເພື່ອໃຫ້ເຂົ້າຮ່ວມງານມອບລາງວັນ ວັນທີ 30 ພະຈິກ 2018. ຜູ່ເຂົ້າປະກວດທຸກທ່ານ ສາມາດເຂົ້າຮ່ວມງານມອບລາງວັນໄດ້.
ຜົນງານທີ່ໄດ້ຖືກຄັດເລືອກ ຈະຖືກປະຊາສຳພັນ ໃນງານວັນມອບລາງວັນ ວັນທີ 30 ພະຈິກ 2018 ແລະເທິງເວັບໄຊ້ ແລະ ເຟສບຸກ ຂອງ ສະຖາບັນຝຣັ່ງ ຕົ້ນເດືອນທັນວາ 2018.

ສຳລັບຄຳຖາມ ຫຼື ຂໍ້ມູນເພີ່ມກ່ຽວກັບກິດຈະກຳ, ສາມາດສອບຖາມໄດ້ ທີ່ culture@if-laos.org